ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===000===---

ນະຄອນຫຼວງວຽງຈັນ

ເລກທີ 1184 /ຈນວ

ວັນທີ 20 DEC 2017

# ຂໍ້ຕົກລົງ
## ວ່າດ້ວຍ ການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນຕົວເມືອງ ແລະ ຊານເມືອງ

- ອີງຕາມ ມາດຕາ 19 ແລະ 20, ໝວດທີ IV ຂອງກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ມາດຕາ 4 ແລະ 5 ຂອງກົດໝາຍ ວ່າດ້ວຍຜັງເມືອງ ຂອງ ສປປ ລາວ ສະບັບເລກທີ 03/99/ສພຊ, ລົງວັນທີ 3 ເມສາ 1999 ແລະ ມາດຕາ 6, ມາດຕາ 41 ໝວດທີ V ຂອງກົດໝາຍ ວ່າດ້ວຍທາງຫຼວງ (ສະບັບປັບປຸງ) ສະບັບເລກທີ 03/ສພຊ, ລົງວັນທີ 8 ພະຈິກ 2016.
- ອີງຕາມ ມາດຕາ 4 ແລະ 6 ຂອງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ) ສະບັບ ເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013 ແລະ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການບັນເທີງສະບັບເລກທີ 315/ນຍ, ລົງວັນທີ 2 ຕຸລາ 2017;
- ອີງຕາມ ມາດຕາ 10 ໝວດທີ II ຂອງກົດໝາຍວ່າດ້ວຍການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມ ມະຕິ ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ I ສະບັບເລກທີ 041/ສປນວ, ລົງວັນທີ 6 ພະຈິກ 2017 ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງວ່າດ້ວຍການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ຊານເມືອງ.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ຊານເມືອງ ເພື່ອປະຕິບັດກົດໝາຍວ່າດ້ວຍຜັງເມືອງ, ກົດໝາຍວ່າດ້ວຍທາງຫລວງແຫ່ງຊາດ, ກົດໝາຍວ່າດ້ວຍການຄ້າ, ກົດໝາຍວ່າດ້ວຍວັດທະນະທຳ ແລະ ການທ່ອງທ່ຽວ ແນ່ໃສ່ຍົກສູງບົດບາດຂອງນະຄອນວຽງຈັນ ໃຫ້ສົມກຽດເປັນເມືອງຫຼວງຂອງປະເທດ, ບັນລຸເປົ້າໝາຍເປັນຕົວເມືອງທີ່ໜ້າຢູ່ ແລະ ຈະເລີນວັດທະນາທະນາເປັນກ້າວໆ.

## ມາດຕາ 2. ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ

ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ຊານເມືອງ ແມ່ນການຊຸກຍູ້ກິດຈະກຳຕ່າງໆທີ່ບໍ່ເໝາະສົມຄືນໃໝ່, ສິ່ງທີ່ຜິດກັບລະບຽບການ, ນິຕິກຳ, ກົດໝາຍ ແລະ ແຜນຜັງຂອງຕົວເມືອງທີ່ໄດ້ກຳນົດໄວ້.

## ມາດຕາ 3. ອະທິບາຍຄຳສັບ ຫຼື ຄວາມໝາຍຂອງການຈັດສັນ

ຄຳສັບ ຫຼື ປະໂຫຍກທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນປະຈຸບັນແມ່ນ ໝາຍເຖິງການແກ້ໄຂບາງປະ ກົດການຫຍໍ້ທໍ້, ສິ່ງຂັດກັບກົດໝາຍ ແລະ ລະບຽບການ ທີ່ພວມເກີດຂຶ້ນ (ກົດໝາຍວ່າດ້ວຍການຄ້າ, ກົດໝາຍວ່າດ້ວຍທາງຫລວງ, ກົດໝາຍວ່າດ້ວຍຜັງເມືອງ, ກົດໝາຍວ່າດ້ວຍວັດທະນະທຳ ແລະ ທ່ອງທ່ຽວ....) ຊຶ່ງບຸກຄົນ ຫລື ນິຕິບຸກຄົນກໍ່ຂຶ້ນ ແລະ ສ້າງຜົນກະທົບບໍ່ດີຕໍ່ສ່ວນລວມບ່ອນນັ້ນໆ.

2. ການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍໃນຂົງເຂດການຄ້າ ແມ່ນໝາຍເຖິງການເຮັດໃຫ້ສູນການຄ້າ, ຕະຫລາດ, ຮ້ານຄ້າ ແລະ ສະຖານທີ່ຊື້-ຂາຍອື່ນໆ ຮັກສາໄດ້ແຜນຜັງຂອງຕະຫລາດ, ສູນການຄ້າ, ຮ້ານຄ້າ, ສະຖານທີ່ການຄ້າທີ່ໄດ້ກຳນົດໄວ້ (ບໍ່ລົ້ນ, ບໍ່ແອອັດ) ແລະ ມີຄວາມເປັນລະບົບລະບຽບ ຮັບປະກັນຄວາມສະອາດ

3. ການຄ້າ-ຂາຍສະດວກສະບາຍ, ຮັບປະກັນຄວາມປອດໄພໃຫ້ຜູ້ປະກອບການ, ລູກຄ້າ ແລະ ແກ້ໄຂປະກົດການຄ້າ ຂາຍຊະຊາຍ (ຂາຍບໍ່ຖືກຈຸດ, ບໍ່ຖືກສະຖານທີ່ ທີ່ທາງການວາງອອກ), ກີດຂວາງການສັນຈອນຂອງພາຫະນະ ແລະ ຄົນ.

4. ການຈັດສັນຄວາມບໍ່ເປັນລະບຽບຮ້ອຍໃນຂົງເຂດໂຍທາທິການ ແລະ ຂົນສົ່ງ - ໝາຍເຖິງການຈັດສັນບາງເສັ້ນທາງເດີນລົດຄືນໃໝ່, ຮື້ຖອນສິ່ງຕໍ່ເຕີມການກໍ່ສ້າງບໍ່ຖືກຕ້ອງກັບແຜນຜັງ ແລະ ສິ່ງຮົກເຮື້ອ ຕາມຖະໜົນຫລວງ ແລະ ເສັ້ນທາງສຳຄັນໃນເທດສະບານ, ຮື້ຖອນປ້າຍໂຄສະນາທຸກຊະນິດທີ່ຕິດຕັ້ງ ແລະ ມີຮູບແບບເນື້ອໃນບໍ່ຖືກລະບຽບ, ແກ້ໄຂສິ່ງກີດຂວາງຕາມທາງຄົນຍ່າງ ແລະ ຕາມເຂດສາທາລະນະ, ຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍໃນກິດຈະການກໍ່ ສ້າງ ແລະ ສ້ອມແປງຕຶກອາຄານ.

5. ການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນຂົງເຂດວັດທະນະທຳ - ໝາຍເຖິງການແກ້ໄຂສະພາບການລະເມີດຂໍ້ຫ້າມ ຊຶ່ງກົດໝາຍວ່າດ້ວຍວັດທະນະທຳ ແລະ ດຳລັດວ່າດ້ວຍການບັນເທີງ ແລະ ສິ່ງທີ່ກະທົບບໍ່ດີເຖິງຊຸມຊົນ ແລະ ດັດປັບການເຄື່ອນໄຫວທຸລະກິດທາງວັດທະນະທຳໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.

6. ຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນຂົງເຂດໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ - ໝາຍເຖິງລະບົບສາຍກາບໂທລະສັບ, ເຄເບິ້ນ, ສາຍໄຟຟ້າແຮງຕ່ຳ ທີ່ຫ້ອຍຕາມເສົາໄຟຟ້າ, ຂາດຄວາມງາມ ແລະ ສາຍໄຟຟ້າເກົ່າແກ່ ໝົດຄຸນນະພາບ, ຂາດມາດຕະຖານເຕັກນິກ ແລະ ບໍ່ຮັບປະກັນຄວາມປອດໄພ.

7. ສິ່ງກີດຂວາງໃນຖະໜົນໝາຍເຖິງ ຜູ້ຄົນ, ວັດຖຸສິ່ງຂອງ, ສິ່ງຕິດຕັ້ງ-ປຸກສ້າງ, ກິດຈະການ ແລະ ກິດຈະກຳທີ່ຕັນ ຫຼື ກີດຂວາງ ຫຼື ເຮັດໃຫ້ມີການສັນຈອນຫຍຸ້ງຍາກຕິດຂັດ ໃນໄລຍະຊົ່ວຄາວ ຫຼື ຖາວອນຢູ່ຕາມແລວທາງຄົນຍ່າງ ຫຼື ພາຫະນະສັນຈອນທຸກປະເພດ.

## ມາດຕາ 4. ຫລັກການຂອງການຈັດສັນ

1. ສອດຄ່ອງກັບກົດໝາຍ, ນິຕິກຳ ແລະ ລະບຽບການ ຂອງຂະແໜງການ ທີ່ໄດ້ປະກາດໃຊ້ ແລະ ມີຜົນສັກສິດແລ້ວ.

2. ສອດຄ່ອງກັບນະໂຍບາຍສ້າງເມືອງຫນ້າຢູ່ ແລະ ແຜນຜັງຕົວເມືອງ, ແຜນຜັງເສັ້ນທາງ, ແຜນຜັງກຳນົດເຂດຕົນປະເພດຕ່າງໆ ທີ່ທາງການໄດ້ກຳນົດໄວ້.

3. ມີຄວາມເປັນເອກະພາບ ແລະ ເທົ່າທຽມກັນຕໍ່ໜ້າກົດໝາຍຂອງຊາວເມືອງ, ຂອງຊຸມຊົນ ໃນຕົວເມືອງ ແລະ ຊານເມືອງ ແລະ ຜູ້ຈໍລະຈອນ.

4. ຮັບປະກັນຄວາມສະຫງົບ, ຄວາມສາມັກຄີປອງດອງ, ມູນເຊື້ອສີວິໄລ ແລະ ກຽດສັກສີ ຂອງຄົນເມືອງຫຼວງ

5. ຮັບປະກັນຄວາມສະດວກ ແລະ ປອດໄພ ໃຫ້ສັງຄົມ, ຖືປະໂຫຍດສ່ວນລວມສູງກວ່າສ່ວນບຸກຄົນ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ.

**ມາດຕາ 5. ຂອບເຂດການນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບອົງການຈັດຕັ້ງຂອງລັດ ແລະ ສັງຄົມ, ບຸກຄົນ, ນິຕິບຸກຄົນ, ຊາວນະຄອນ ແລະ ລວມທັງຜູ້ທີ່ພັກພາອາໄສ ແລະ ຜູ້ມີສ່ວນກ່ຽວພັນກັບ ການສັນຈອນ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍ ຢູ່ນະຄອນຫຼວງວຽງຈັນ.

## ຫມວດທີ II
## ເປົ້າໝາຍ, ກິດຈະກຳ ຂອງການຈັດສັນ

**ມາດຕາ 6. ຂະແໜງການເປົ້າໝາຍການຈັດສັນໃນປະຈຸບັນ.**

ການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໄລຍະປະຈຸບັນ ສຸມໃສ່ 4 ຂົງເຂດ ຫຼື ຂະແໜງການ ຄື:

6.1. ຂົງເຂດການຄ້າ.

6.2. ຂົງເຂດໂຍທາທິການ ແລະ ຂົນສົ່ງ.

6.3. ຂົງເຂດພະລັງງານ ແລະ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ.

6.4. ຂົງເຂດວັດທະນະທຳ.

**ມາດຕາ 7. ເປົ້າໝາຍ ແລະ ກິດຈະກຳຈຸດສຸມ ໃນຂົງເຂດການຄ້າ:**

- ຈັດສັນການປະກອບກິດຈະການທີ່ລົ້ນຕະຫລາດ ຄືນໃຫມ່ (ຕາມບັນຊີຂອງພະແນກອຸດສາຫະກຳ ແລະ ການຄ້າ)
- ຈັດສັນການຊື້-ຂາຍຊະຊາຍຕາມແຄມທາງ ແລະ ທາງຖະໜົນ, ເສັ້ນທາງ, ຂາຍນອກສະຖານທີ່ ທີ່ອະນຸຍາດ.
- ຈັດໝວດສິນຄ້າໃນຕຶກ, ອາຄານຂອງຕະຫຼາດ ຫຼື ສູນການຄ້າ.
- ຈັດວາງການຕິດຕັ້ງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ນັບທັງສາຍໄຟ, ສາຍໂທລະສັບ ທໍ່ນ້ຳປະປາ, ທໍ່ ຫຼື ຮ່ອງລະບາຍນ້ຳ ແລະ ອື່ນໆ ທີ່ຢູ່ໃນ ແລະ ນອກອ້ອມຂ້າງຕະຫຼາດ, ສູນການຄ້າ ຫຼື ສະຖານທີ່ບໍລິການຄ້າຂາຍຕ່າງໆ.

**ມາດຕາ 8. ກິດຈະກຳຈຸດສຸມ ຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍຂົງເຂດໂຍທາທິການ ແລະຂົນສົ່ງ:**

**8.1. ການຈັດສັນສາທາລະນະປະໂຫຍດ ແລະ ສິ່ງອຳນວຍການຈາລະຈອນ ຂອງລົດຄັນໃຫຍ່.**

- ແກ້ໄຂທິດທາງການສັນຈອນບາງເສັ້ນທາງ ຈາກ 2 ທິດທາງ (Two way) ເປັນທິດທາງດຽວ (one way).
- ແກ້ໄຂການແລ່ນລົດບັນທຸກ ຕາມເສັ້ນທາງເຂົ້າ-ອອກໃນຕົວເມືອງ ແລະ ສະຖານີ ທີ່ບໍ່ຖືກຕ້ອງ.

- ຈັດສັນຈຸດຈອດລົດຄືນໃໝ່ໃນພື້ນທີ່ ທີ່ມີສະພາບລົດຕິດ: ໂຮງຮຽນ, ຕະຫລາດ, ຮ້ານອາຫານ, ສຳນັກງານຫ້ອງການ, ຮ້ານຂາຍເຄື່ອງ....(ຕາມບັນຊີຂອງພະແນກໂຍທາທິການ-ຂົນສົ່ງ)
- ຈັດສັນບັນດາສະຖານີ (ຄິວລົດ) ລົດໂດຍສານ, ລົດສອງແຖວ, ລົດແທກຊີ່ (Taxi), ລົດຕຸກໆ, ລົດຕູ້, ລົດຈຳໂບ້ ຄືນໃໝ່ (ຕາມບັນຊີຂອງພະແນກໂຍທາທິການ-ຂົນສົ່ງ)

8.2. ຮື້ຖອນສິ່ງຕໍ່ເຕີມກໍ່ສ້າງບໍ່ຖືກຕ້ອງ ກັບແຜນຜັງ ແລະ ສິ່ງຮົກເຮື້ອ ຕາມຖະໜົນຫລວງ ແລະ ເສັ້ນທາງສຳຄັນໃນເທດສະບານ.
- ເກັບກູ້ສິ່ງເສດເຫລືອຮົກເຮື້ອ ຕາມຂອບທາງ.
- ມ້າງສິ່ງຕໍ່ເຕີມທີ່ບໍ່ອະນຸຍາດ ແລະ ອະນຸຍາດຖືກຕ້ອງແຕ່ກະທົບເຖິງຄວາມປອດໄພຕາມທ້ອງຖະໜົນ.
- ມ້າງເທີບ-ເງີບ ກັ້ງແດດ-ຝົນ ລົ້ນຂອບເຂດອາຄານ... ທີ່ຢູ່ຕາມແຄມທາງ.
- ມ້າງເຮືອນ, ຕູບ, ຮົ້ວ, ກຳແພງທີ່ ຊຸດໂຊມ ໃຊ້ການບໍ່ໄດ້.

8.3. ຮື້ຖອນປ້າຍ ແລະ ແຜນກະດາດໂຄສະນາທີ່ຕິດຕັ້ງບໍ່ຖືກລະບຽບການ:
- ຮື້ຖອນປ້າຍຕາມຖະໜົນ, ເສັ້ນທາງ, ຈຸດທາງໂຄ້ງ, ທາງແຍກທີ່ມີຄວາມແອອັດ ທີ່ກະທົບເຖິງຄວາມປອດໄພທາງຖະໜົນ.
- ຮື້ຖອນປ້າຍ, ການຕິດຕັ້ງປ້າຍຊະຊາຍ (ຕິດປ້າຍທີ່ບໍ່ອະນຸຍາດ) ເຊັ່ນ: ຕາມຝາ, ກຳແພງ, ຕົ້ນໄມ້ ແລະ ເສົາໄຟຟ້າຕາມແຄມທາງ, ເສົາປ້າຍສັນຍານຈາລະຈອນ.
- ຮື້ຖອນປ້າຍທີ່ຂາດມາດຖານເຕັກນິກບໍ່ດຸນດ່ຽງລະຫວ່າງນ້ຳໜັກກັບຂະໜາດ ບໍ່ຮັບປະກັນເຖິງຄວາມປອດໄພ.

8.4. ແກ້ໄຂສິ່ງກີດຂວາງຕາມທາງຄົນຍ່າງ ແລະ ຕາມພື້ນທີ່ສາທາລະນະສະຖານ.
- ການຈອດລົດຊະຊາຍ, ຈອດລົດຕາມທາງຄົນຍ່າງ, ຕາມແຄມທາງທີ່ທາງການບໍ່ອະນຸຍາດ, ການວາງວັດສະດຸກໍ່ສ້າງ, ຕັ້ງລໍ້, ກາງເຕັ້ນຈັດງານ, ວາງເຄື່ອງຂອງ ຫລື ວາງສິນຄ້າທຸກປະເພດ ຂາຍຢູ່ຕາມທາງຄົນຍ່າງ, ຕາມເສັ້ນທາງສາຍຫລັກ 21 ເສັ້ນ ແລະ ເຂດສະຫງວນສາທາລະນະແຄມຖະໜົນ ແລະ ຖະໜົນໃນເຂດເທດສະບານ ແລະ ນອກເຂດເທດສະບານ (ເມືອງໄຊທານີ, ເມືອງນາຊາຍທອງ, ເມືອງຫາດຊາຍຟອງ, ເມືອງສັງທອງ ແລະ ເມືອງປາກງື່ມ).
- ຕັດຮອນ, ຕົບແຕ່ງຕົ້ນໄມ້, ງ່າໄມ້ ຕາມແຄມຖະໜົນ, ເສັ້ນທາງ ແລະ ສວນສາທາລະນະ.

8.5. ຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍໃນກິດຈະການກໍ່ສ້າງ ແລະ ສ້ອມແປງຕຶກອາຄານ:
- ການວາງອຸປະກອນກໍ່ສ້າງຊະຊາຍ, ລົ້ນຂອບເຂດຂອງດິນ ກວມເອົາທາງຍ່າງ ແລະ ເສັ້ນທາງການສັນຈອນຂອງລົດ.
- ຄວາມຮົກເຮື້ອ, ເສດວັດສະດຸປະໄວ້ຂອງກິດຈະການກໍ່ສ້າງ-ສ້ອມແປງ.
- ຂາດການນຳໃຊ້ອຸປະກອນປ້ອງກັນຄວາມປອດໄພ, ອຸປະກອນຮັກສາຄວາມສະອາດ ຫຼື ມີແຕ່ຄວາມອະສີວິໄລ.

ມາດຕາ 9. ກິດຈະກຳຈຸດສຸມຂອງການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ຂົງເຂດພະລັງງານ-ບໍ່ແຮ່ ແລະ ໄປສະນີ, ໂທລະຄົມມະນາຄົມ-ການສື່ສານ:

9.1 ຊຸມສາຍໄຟຟ້າ, ສາຍໂທລະສັບ ແລະ ສາຍເຄເບີ້ນ ຕາມເສັ້ນທາງຫລວງແຫ່ງຊາດ ແລະ ເສັ້ນທາງຫລັກ 25 ເສັ້ນ ໃນເທດສະບານຂອງ ນວ, ເທດສະບານຂອງເມືອງ, ສູນການຄ້າຕະຫລາດ ແລະ ຊຸມຊົນແອອັດ.

9.2 ການຕໍ່ເຕີມສາຍໄຟຟ້ານອກແຜນຜັງ, ເກົ່າແກ່ຊຸດໂຊມ ແລະ ຂາດມາດຕະຖານ.

9.3 ການເຈຍລະໄນ, ແກະສະຫຼັກໄມ້, ການເຈາະສ່ວນໂລຫະ ທີ່ຂາດມາຖານສິ່ງແວດລ້ອມ ສົ່ງຜົນກະທົບຕໍ່ສຸຂະພາບພາລະນາໄມຂອງເພື່ອນບ້ານ (ກິ່ນ, ຂີ້ຝຸ່ນ, ສານເຄມີ, ສຽງ, ລັງສີ)

**ມາດຕາ 10. ກິດຈະກໍາຈຸດສຸມ ຈັດສັນຄວາມບໍ່ເປັນຮຽບຮ້ອຍ ຊຶ່ງເຂດວັດທະນະທໍາ.**

10.1 <u>ສະຖານອໍານວຍຊ່ວຍເຫຼືອກໍ່ໃຫ້ເກີດມີແກ້ງແຂ່ງລົດກວນເມືອງ</u>, ແກ້ງມົ້ວສຸມດື່ມ-ເສບສິ່ງມືນເມົາແລ້ວຍາ <u>ລະວາດຕີກັນ.</u>

10.2 ຈັດສັນຄືນໃໝ່ສະຖານທີ່ບັນເທີງ, ຄາລາໂອເກະ ແລະ ຮ້ານກາເຟຢອດ... ທີ່ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ເກີດການກະທໍາທີ່ລາມົກອານາຈານ (ເປັນຕົ້ນໃນເຂດໃຈກາງຕົວເມືອງ, ເຂດມໍລະດົກ, ວັດທະ ນະທໍາ, ເຂດສໍານັກງານ ແລະ ສະຖານການສຶກສາ).

10.3 ແກ້ໄຂທຸລະກິດບັນເທີງຈໍາກັດ ແລະ ສະຖານທີ່ບັນເທີງລວມໝູ່ກາງແຈ້ງ ທີ່ສົ່ງສຽງດັງເກີນອັດຕາຈໍາເປັນທີ່ກໍານົດໄວ້ໃນຄໍາສັ່ງ 315/ລບ, ລົງວັນທີ 2 ຕຸລາ 2017.

10.4 ບຸກຄົນ, ນິຕິບຸກຄົນກະທໍາສຽງດັງເກີນຄວາມຈໍາເປັນ ລົບກວນຊຸມຊົນອ້ອມຂ້າງ (ສຽງເສບຄົນຕີ, ສຽງໝາກກະໂພກ...)

**ມາດຕາ 11. ວິທີການ ແລະ ມາດຕະການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ.**

11.1 ຂະແໜງການກ່ຽວຂ້ອງເປັນເຈົ້າ ໃຫ້ການປະຊາສໍາພັນ, ສຶກສາອົບຮົມປຸກລະດົມບຸກຄົນ, ນິຕິບຸກຄົນໃຫ້ເຊື່ອມຊຶມຄວາມໝາຍຄວາມສໍາຄັນຂອງການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ແລະ ຜົນເສຍຫາຍຂອງການຂາດຄວາມບໍ່ເປັນລະບຽບໃນຕົວເມືອງຫຼວງ.

11.2 ໃຫ້ຂະແໜງການກ່ຽວຂ້ອງເຜີຍແຜ່ກົດໝາຍ, ນິຕິກໍາ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງກັບຄົນ ດ້ວຍຮູບການແຈ້ງການ, ອອກຂໍ້ແນະນໍາ, ສ້າງປຶ້ມຄູ່ມື ແລະ ນໍາໃຊ້ສື່ມວນຊົນປະເພດຕ່າງໆ ທີ່ກ່ຽວຂ້ອງກັບການແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍ.

11.3 ປຸກລະດົມໃຫ້ມີສະຕິ, ມີວິໄນ ແລະ ເສີມຂະຫຍາຍສິດເປັນເຈົ້າຕົນເອງ ຂອງປະຊາຊົນທີ່ດໍາລົງຊີວິດໃນຕົວເມືອງ ໃຫ້ເຄົາລົບກົດໝາຍ, ລະບຽບການ. ນາຍບ້ານ, ຫົວໜ້າໜ່ວຍ 10 ຫຼັງຄາເຮືອນ ຕ້ອງເປັນເຈົ້າການ <u>ໃນການຈັດສັນຄວາມເປັນລະບຽບ ຮຽບຮ້ອຍ</u>.

11.4 ເປັນພັນທະໜ້າທີ່ຂອງພົນລະເມືອງ, ຖືປະຊາຊົນເປັນກໍາລັງແຮງສະກັດກັ້ນ ແລະ ແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍພາຍໃນຕົວເມືອງ (ບ້ານຂອງຕົນເອງ).

11.5 ດໍາເນີນການທາງບໍລິຫານ ແລະ ກົດໝາຍ ຕາມຂະແໜງການຂອງຕົນເພື່ອແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍຢ່າງເໝາະສົມຕໍ່ບຸກຄົນ, ນິຕິບຸກຄົນທີ່ລະເມີດລະບຽບກົດໝາຍ ແລະ ສ້າງຄວາມບໍ່ເປັນລະບຽບຮຽບຮ້ອຍໃນຂະແໜງການຕ່າງໆ.

## ໝວດທີ III

## ອົງການຈັດສັນຄວາມເປັນລະບຽບຮຽບຮ້ອຍ

**ມາດຕາ 12. ອົງການຮັບຜິດຊອບຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍປະກອບມີ:**

12.1 ອົງການປົກຄອງ ນະຄອນຫຼວງວຽງຈັນ ( ພະແນກການ ແລະ ອົງການທີ່ກ່ຽວຂ້ອງ )

12.2 ອົງການປົກຄອງເມືອງ ( ຫ້ອງການ ແລະ ອົງການທີ່ກ່ຽວຂ້ອງ ຂັ້ນເມືອງ)

12.3 ອົງການປົກຄອງບ້ານ (5 ໜ່ວຍງານ)

12.4 ກອງບັນຊາການປ້ອງກັນຄວາມສະຫງົບ ແລະ ຕຳຫຼວດຈາລະຈອນ.

**ມາດຕາ 13. ສິດ ແລະ ໜ້າທີ່ ຂອງອົງການປົກຄອງນະຄອນຫຼວງວຽງຈັນ:**

13.1 ຈັດຕັ້ງປະຕິບັດກົດໝາຍ, ດຳລັດ, ອອກນິຕິກຳ ແລະ ລະບຽບການທີ່ຈຳເປັນ.

13.2 ບັນຊາ ແລະ ອຳນວຍຄວບຄຸມການຈັດຕັ້ງປະຕິບັດຕໍ່ພະແນກການ-ອົງການອ້ອມຂ້າງ ນະຄອນຫຼວງ ແລະ ຊີ້ນຳການຈັດຕັ້ງປະຕິບັດຢູ່ຂັ້ນເມືອງ ຢ່າງລວມສູນ, ເປັນເອກະພາບທົ່ວ ນວ.

13.3 ໃຫ້ການແນະນຳອຳນວຍຊ່ວຍເຫຼືອໃຫ້ພະນັກງານ ແລະ ເຈົ້າໜ້າທີ່ປະຕິບັດງານຈັດສັນຄວາມເປັນລະບຽບຮຽບຮ້ອຍ.

13.4 ແນະນຳ ແລະ ຝຶກອົບຮົມ ພະນັກງານ, ລັດຖະກອນ, ກຳມະກອນ, ນັກຮຽນນັກສຶກສາ ແລະ ປຸກລະດົມຊວນເຊື່ອຜູ້ປະກອບການໃຫ້ເຂົ້າໃຈ ແລະ ໃຫ້ຄວາມຮ່ວມມືໃນການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ທົ່ວ ນວ.

13.5 ອະນຸມັດງົບປະມານທີ່ຈຳເປັນເຂົ້າໃນວຽກງານຈັດສັນຄວາມເປັນລະບຽບຮຽບຮ້ອຍ.

13.6 ຕິດຕາມກວດກາການເຄື່ອນໄຫວປະຕິບັດໜ້າທີ່ຂອງແຕ່ລະອົງກອນ ແລະ ພະນັກງານຕາມການແບ່ງງານ.

13.7 ສະຫຼຸບຕີລາຄາ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານໃຫ້ລັດຖະບານ ແລະ ສະພາປະຊາຊົນຊາບຢ່າງເປັນປົກກະຕິ.

13.8 ພິຈາລະນາຂໍ້ສະເໜີຕ່າງໆ ຂອງພະແນກການ-ຫ້ອງການ ແລະ ອົງການປົກຄອງເມືອງ ທີ່ພົວພັນເຖິງການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ.

13.9 ມີສິດໜ້າທີ່ອື່ນ ຕາມກົດໝາຍກຳນົດໄວ້.

**ມາດຕາ 14. ສິດ ແລະ ໜ້າທີ່ ຂອງພະແນກການ-ອົງການທີ່ກ່ຽວຂ້ອງ.**

14.1. ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ <u>ຮັບຜິດຊອບໃນການຕິດຕາມ ແລະ ກວດກາ</u> ການຈັດຕັ້ງປະຕິບັດວຽກງານຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນເທດສະບານ ຕາມກົດໝາຍ, ນິຕິກຳທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້.

14.2. ກອງບັນຊາການປ້ອງກັນຄວາມສະຫງົບ ແລະ ຕຳຫຼວດຈາລະຈອນ ເປັນອົງກອນ ແລະ ກຳລັງໂດຍກົງຂອງການແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍ ຕາມລະບຽບການ ແລະ ກົດໝາຍ ກຳນົດໄວ້.

14.3. ພະແນກອຸດສາຫະກຳ ແລະ ການຄ້າ ເປັນອົງການຮັບຜິດຊອບແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍ, ນຳພາການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນຂົງເຂດການປະກອບການດ້ານອຸດສາຫະກຳ-ການຄ້າ.

14.4. ພະແນກໂຍທາທິການ-ຂົນສົ່ງ ເປັນອົງການຮັບຜິດຊອບຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນຂົງເຂດໂຍທາທິການ ແລະ ຂົນສົ່ງ.

14.5. ພະແນກພະລັງງານ-ບໍ່ແຮ່ ເປັນອົງການຮັບຜິດຊອບຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນຂົງເຂດພະລັງງານ-ບໍ່ແຮ່ (ຊຸມສາຍໄຟຟ້າໃນຕົວເມືອງ ແລະ ການຕິດຕັ້ງສາຍໄຟຟ້າຂາດມາດຖານ).

14.6. ພະແນກໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ເປັນອົງການຮັບຜິດຊອບຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນຂົງເຂດໂທລະຄົມມະນາຄົມ ແລະ ການສື່ສານ (ການຕິດຕັ້ງສາຍໂທລະສັບ, ສາຍເຄບິນ, ສາຍສົ່ງອິນເຕີເນັດ)

14.7. ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ເປັນອົງການຮັບຜິດຊອບຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນຂົງເຂດວັດທະນະທຳ ແລະ ທ່ອງທ່ຽວ (ກວດກາ ແລະ ຕິດຕາມການຕິດຕັ້ງປ້າຍໂຄສະນາ, ປະຊາສຳພັນ, ການດຳເນີນທຸລະກິດບັນເທີງ, ຮ້ານອາຫານ, ການຈັດງານບຸນປະເພນີຕ່າງໆ...)

14.8. ຄະນະອົງການເສນາທິການຂອງພັກ, ອົງການປົກປ້ອງຄວາມເປັນທຳ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນ ນວ ປະຕິບັດສິດໜ້າທີ່ຂອງຕົນ ເຂົ້າໃນການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ.

**ມາດຕາ 15. ສິດ ແລະ ໜ້າທີ່ ຂອງອົງການປົກຄອງເມືອງ.**

15.1. ຈັດຕັ້ງປະຕິບັດກົດໝາຍ, ດຳລັດ, ອອກນິຕິກຳ ແລະ ລະບຽບການທີ່ຈຳເປັນ.

15.2. ບັນຊາ ແລະ ອຳນວຍຄວບຄຸມການຈັດຕັ້ງປະຕິບັດຂອງໜ່ວຍງານ, ຫ້ອງການ ແລະ ອົງການອ້ອມຂ້າງຂອງເມືອງ ແລະ ຊີ້ນຳການຈັດຕັ້ງປະຕິບັດຢູ່ຂັ້ນເມືອງ, ຂັ້ນອົງການປົກຄອງບ້ານ ຢ່າງລວມສູນ, ເປັນເອກະພາບທົ່ວ ນວ.

15.3. ໃຫ້ການແນະນຳອຳນວຍຊ່ວຍເຫຼືອໃຫ້ພະນັກງານ ແລະ ເຈົ້າໜ້າທີ່ຜູ້ປະຕິບັດງານຈັດສັນຄວາມເປັນລະບຽບຮຽບຮ້ອຍ.

15.4. ແນະນຳພະນັກງານ, ລັດຖະກອນ, ກຳມະກອນ, ນັກຮຽນນັກສຶກສາ ປຸກລະດົມຊວນເຊື່ອຜູ້ປະກອບການໃຫ້ເຂົ້າໃຈ ແລະ ໃຫ້ຄວາມຮ່ວມມືໃນການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ທົ່ວ ເມືອງ.

15.5. ອະນຸມັດງົບປະມານທີ່ຈຳເປັນເຂົ້າໃນວຽກງານຈັດສັນຕາມຄວາມຈຳເປັນ ແລະ ເໝາະສົມ.

15.6. ຕິດຕາມກວດກາການເຄື່ອນໄຫວປະຕິບັດໜ້າທີ່ຂອງແຕ່ລະອົງກອນ ແລະ ພະນັກງານຕາມການແບ່ງງານ

15.7. ສະຫຼຸບຕີລາຄາ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານໃຫ້ອົງການປົກຄອງ ນວ ແລະ ສະພາປະຊາຊົນຊາບຢ່າງເປັນປົກກະຕິ.

15.8. ພິຈາລະນາຂໍ້ສະເໜີຕ່າງໆຂອງຂະແໜງການ-ຫ້ອງການ ແລະ ອົງການປົກຄອງບ້ານ ທີ່ພົວພັນເຖິງການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ.

15.9. ມີສິດໜ້າທີ່ອື່ນຕາມກົດໝາຍກຳນົດ ແລະ ການໝອບໝາຍຂອງອົງການປົກຄອງ ນວ.

**ມາດຕາ 16. ສິດ ແລະ ໜ້າທີ່ຂອງ ອົງການປົກຄອງບ້ານ:**

16.1. ເຜີຍແຜ່ແນະນຳເປົ້າໝາຍ ກິດຈະກຳຈຸດສຸມ ແລະ ມາດຕະການຈັດສັນຄວາມເປັນລະບຽບຮຽບຮ້ອຍໃຫ້ປະຊາຊົນ ຢູ່ພາຍໃນບ້ານຂອງຕົນ ເຊື່ອມຊຶມ ແລະ ເຂົ້າຮ່ວມຂະບວນການພາຍໃນບ້ານຕົນ.

16.2. ສ້າງແຜນ ແລະ ກິດຈະກຳຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ຢູ່ພາຍໃນບ້ານຂອງຕົນຕາມຄວາມເໝາະສົມ.

16.3. ປຸກລະດົມທຶນ, ວັດຖຸປັດໃຈ ແລະ ການມີສ່ວນຮ່ວມຂອງປະຊາຊົນ ແລະ ຈັດຕັ້ງຂະບວນການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ຢູ່ພາຍໃນບ້ານຂອງຕົນ.

16.4. ຈັດກອງປະຊຸມບ້ານ ເພື່ອປຶກສາຫາລືແກ້ໄຂຈຸດຫຍຸ້ງຍາກຕ່າງໆ ແລະ ຫາຄວາມເປັນເອກະພາບກັນ ຈັດສັນຄວາມເປັນລະບຽບຮຽບຮ້ອຍ ຢູ່ພາຍໃນບ້ານຂອງຕົນໃຫ້ໄດ້ຮັບຜົນດີ.

16.5. ທັກທ້ວງບຸກຄົນ, ນິຕິບຸກຄົນທີ່ລະເມີດລະບຽບໃນຂອບເຂດບ້ານຂອງຕົນ.

16.6. ສະຫຼຸບ ແລະ ລາຍງານວຽກງານການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍຂອງບ້ານຕົນ ໃຫ້ອົງການປົກຄອງເມືອງ.

16.7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມກົດໝາຍ ແລະ ການມອບໝາຍ ຂອງອົງການປົກຄອງເມືອງ.

## ໝວດທີ IV

## ລາຍຮັບ ແລະ ລາຍຈ່າຍຂອງການຈັດສັນຄວາມເປັນລະບຽບຮຽບຮ້ອຍ

**ມາດຕາ 17. ລາຍຮັບ.**

+ ລາຍຮັບວິຊາການຂອງພະແນກການ ແລະ ອົງການ
+ ລາຍຮັບຈາກການສະໜັບສະໜູນຈາກກອງທຶນທາງ ໃນພູດຂອງ ນວ
+ ລາຍຮັບຈາກການປະກອບສ່ວນຂອງປະຊາຊົນ, ບຸກຄົນ, ນິຕິບຸກຄົນ.
+ ລາຍຮັບຈາກຜູ້ລະເມີດກະຕິກາ ແລະ ໃຊ້ຈ່າຍການຈັດສັນເອົາເອງ.
+ ລາຍຮັບການປັບໃໝ
+ ລາຍຮັບອື່ນໆ.

**ມາດຕາ 18. ລາຍຈ່າຍ:**

+ ຄ່າໃຊ້ຈ່າຍໃນການຈັດພິມເອກະສານ, ປຶ້ມຄູ່ມື ແລະ ການຝຶກອົບຮົມ
+ ຄ່າເຊົ່າລົດຂົນສົ່ງ ຍົກຍ້າຍສິ່ງກີດຂວາງ.
+ ສະໜັບສະໜູນອັດຕາກິນໃຫ້ ເຈົ້າໜ້າທີ່ ຜູ້ປະຕິບັດຕົວຈິງ 20.000 ກີບ/ວັນ/ຄົນ ແລະ ຄ່າແຮງງານຂອງອາສາສະໝັກຜູ້ປະຕິບັດຕົວຈິງ 30.000 ກີບ/ວັນ/ຄົນ.

**ມາດຕາ 19. ການຄຸ້ມຄອງລາຍຮັບ-ລາຍຈ່າຍ:**

19.1. ເປີດບັນຊີແຫ່ງລັດໄວ້ຄັງເງິນແຫ່ງຊາດ ປະຈຳນະຄອນຫຼວງວຽງຈັນ, ໂດຍອອກຊື່ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ.

19.2. ລາຍຮັບທີ່ໄດ້ຈາກການປັບໃໝ ແມ່ນຖອກເຂົ້າບັນຊີຄັງເງິນແຫ່ງຊາດ ປະຈຳ ນວ ຂອງຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງ.

19.3. ໜ່ວຍງານສະເພາະກິດ ຂຶ້ນແຜນງົບປະມານໃຊ້ຈ່າຍບໍລິຫານ ການລົງເຄື່ອນໄຫວວຽກງານ ຕາມລະບຽບການ ແລະ ສະເໜີນຳໃຊ້ບ້ວງເງິນດັ່ງກ່າວ ຕາມແຜນວຽກທີ່ໄດ້ກຳນົດໄວ້ຕົວຈິງ.

19.4. ສະຫຼຸບລາຍຮັບ-ລາຍຈ່າຍເງິນປັບໃໝ ໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິ.

## ໝວດທີ V

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 20. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງທີ່ມີຜົນງານປະກອບສ່ວນ ເຂົ້າໃນການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມລະບຽບການ.

**ມາດຕາ 21. ມາດຕະການຕໍ່ຜູ້ລະເມີດ.**

1. ຕໍ່ບຸກຄົນ, ນິຕິບຸກຄົນ ທີ່ເມີນເສີຍ ບໍ່ເຂົ້າຮ່ວມ ຫຼື ມີພຶດຕິກຳກະທຳຜິດຕໍ່ການແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍໃນຕົວເມືອງ ໃຫ້ດຳເນີນການຕາມລະບຽບການ ແລະ ກົດໝາຍຂອງຂະແໜງກ່ຽວຂ້ອງ ກຳນົດ.
2. ຕໍ່ພະນັກງານ, ເຈົ້າໜ້າທີ່ ທີ່ປະຕິບັດວຽກການຈັດສັນ ທີ່ເມີນເສີຍ ບໍ່ເຂົ້າຮ່ວມ ຫຼື ມີພຶດຕິກຳກະທຳຜິດຕໍ່ບຸກຄົນ, ນິຕິບຸກຄົນ ທີ່ມີການພົວພັນກັບຄວາມບໍ່ເປັນລະບຽບຮຽບຮ້ອຍ ແລະ ກໍ່ຄວາມເສຍຫາຍຕໍ່ການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ຫຼືບຫຼີກຈາກຄວາມຜິດຂອງຕົນ ຈະຖືກລົງວິໄນຕາມລະບຽບການ ແລະ ກົດໝາຍວ່າດ້ວຍລັດຖະກອນກຳນົດໄວ້.

## ໝວດທີ VI

## ບົດບັນຍັດສຸດທ້າຍ

**ມາດຕາ 22. ການຈັດຕັ້ງປະຕິບັດ.**

1. ການຈັດຕັ້ງປະຕິບັດເປົ້າໝາຍ ໃນການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍ ໂດຍມີ 4 ຂົງເຂດ ຂະແໜງການ ແລະ ບັນດາກິດຈະກຳທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໃຫ້ໄດ້ປະຕິບັດໃນພື້ນທີ່ ທີ່ມີຄວາມບໍ່ເປັນລະບຽບຮຽບຮ້ອຍ ແລະ ບໍ່ຂັດກັບກົດໝາຍທີ່ກຳນົດໄວ້. ເມື່ອການຈັດຕັ້ງປະຕິບັດຕົວຈິງຫາກເຫັນວ່າເປົ້າໝາຍໃດ, ກິດຈະກຳໃດບໍ່ສອດຄ່ອງກັບກົດໝາຍ ຫຼື ລະບຽບການ ຂອງຂະແໜງການຂັ້ນກາງວາງອອກ ແມ່ນໃຫ້ປະສານງານ ເພື່ອພິຈາລະນາຢ່າງໄວວາ ແລະ ເປັນເອກະພາບ ຈຶ່ງດຳເນີນການຕໍ່ໄປ.
2. ພະແນກການ, ອົງການ-ຫ້ອງການທຽບເທົ່າ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.
3. ຊາວນະຄອນຫຼວງ, ຄົນຕ່າງດ້າວ ແລະ ຄົນຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວຢູ່ໃນນະຄອນຫຼວງ ຕື່ນຕົວປະກອບສ່ວນ ແລະ ມີພັນທະໜ້າທີ່ເຂົ້າໃນການແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍ ຢູ່ນະຄອນຫຼວງວຽງຈັນ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ຈັດພິມລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການຂອງ ນວ 15 ວັນ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ບ່ອນສົ່ງ :

| | |
|---|---|
| - ເຈົ້າຄອງ-ຮອງເຈົ້າຄອງ ນະຄອນຫລວງວຽງຈັນ | 03 ສະບັບ |
| - ທຸກຫ້ອງການຂອງກະຊວງ, ອົງການອ້ອມຂ້າງສູນກາງພັກ ສະພາແຫ່ງຊາດ ແລະ ລັດຖະບານ | 01 ສະບັບ. |
| - ຫ້ອງການຄະນະເລຂາທິການສະພາປະຊາຊົນ ນວ | 01 ສະບັບ. |
| - ທຸກພະແນກການ, ອົງການທຽບເທົ່າ ອ້ອມຂ້າງ ນວ ບ່ອນລະ | 01 ສະບັບ. |
| - ທຸກເມືອງ ອ້ອມຂ້າງ ນວ | 01 ສະບັບ. |
| - ເກັບມ້ຽນ | 03 ສະບັບ. |

ປອ.ສິນລະວົງ ຄູດໄພທູນ